DSHS
WASHINGTON STATE
Department of Social and Health Services

ການເປີດເຜີຍຂໍ້ມູນລ່ວງໜ້າການເປີດນຳໃຊ້ບັດ ReliaCard® ຂອງທະນາຄານ U.S. Bank
ຊື່ໂຄງການ: Washington Division of Child Support

ການບໍລິການອາດຈະມີໃຫ້ເປັນພາສາອັງກິດເທົ່ານັ້ນ.

| ຄ່າທຳນຽມລາຍເດືອນ | ການຊື້ຫນຶ່ງຄັ້ງ | ການຖອນເງິນຈາກຕູ້ ATM | ການຕື່ມເງິນສົດຄືນໃໝ່ |
|---|---|---|---|
| **$0** | **$0** | **$0** ໃນເຄືອຂ່າຍ<br>**$0.99*** ນອກເຄືອຂ່າຍ | **ບໍ່ນຳໃຊ້** |

| | |
|---|---|
| ການຂໍກວດຍອດເງິນທີ່ຍັງເຫຼືອຜ່ານຕູ້ ATM (ໃນເຄືອຂ່າຍ ຫຼື ນອກເຄືອຂ່າຍ) | $0 |
| ການບໍລິການລູກຄ້າ (ແບບອັດຕະໂນມັດ ຫຼື ແບບມີພະນັກງານປະຈຳ) | $0 ຕໍ່ການໂທຄັ້ງໜຶ່ງ |
| ການບໍ່ມີການເຄື່ອນໄຫວ | $0 |

**ພວກເຮົາເກັບຄ່າທຳນຽມອື່ນໆອີກ 3 ປະເພດ.**
ນີ້ແມ່ນຄ່າທຳນຽມເຫຼົ່ານັ້ນບາງປະເພດ:

| | |
|---|---|
| ການເຮັດທຸລະກຳລະຫວ່າງປະເທດ | 2% |
| ການປ່ຽນບັດໃໝ່ (ການຈັດສົ່ງແບບມາດຕະຖານ ຫຼື ແບບດ່ວນ) | $0 ຫຼື $15.00 |

* ຄ່າທຳນຽມນີ້ອາດຈະຕ່ຳກວ່ານີ້ ໂດຍຂຶ້ນຢູ່ກັບວິທີການ ແລະ ສະຖານທີ່ນຳໃຊ້ບັດນີ້.

**ບໍ່ມີຄຸນສົມບັດການເບີກເງິນເກີນບັນຊີ/ເຄຼດິດ.**
ເງິນຂອງທ່ານມີສິດໄດ້ຮັບການປະກັນໄພ FDIC.

ສຳລັບຂໍ້ມູນທົ່ວໄປກ່ຽວກັບບັນຊີຊຳແບບຕື່ມເງິນ, ໃຫ້ເຂົ້າໄປທີ່ *cfpb.gov/prepaid* (ເປັນພາສາອັງກິດ).
ຊອກຫາລາຍລະອຽດ ແລະ ເງື່ອນໄຂຕ່າງໆ ສຳລັບຄ່າທຳນຽມ ແລະ ການບໍລິການທັງໝົດ ຢູ່ໃນຊອງໃສ່ບັດ ຫຼື ໂທຫາເບີ **1-866-363-4136** ຫຼື ເຂົ້າໄປທີ່ **usbankreliacard.com** (ເປັນພາສາອັງກິດ).

| ຄ່າທຳນຽມທັງໝົດ | ຈຳນວນເງິນ | ລາຍລະອຽດ |
|---|---|---|
| **ການຮັບເງິນສົດ** | | |
| ການຖອນເງິນຈາກຕູ້ ATM (ໃນເຄືອຂ່າຍ) | $0 | ນີ້ແມ່ນຄ່າທຳນຽມໃນການຖອນຕໍ່ຄັ້ງຂອງພວກເຮົາ. “ໃນເຄືອຂ່າຍ” ໝາຍເຖິງ ເຄືອຂ່າຍຕູ້ ATM ຂອງທະນາຄານ U.S. Bank ຫຼື MoneyPass®. ທີ່ຕັ້ງຂອງຕູ້ແມ່ນເບິ່ງໄດ້ຢູ່ທີ່ *usbank.com/locations* (ເປັນພາສາອັງກິດ) ຫຼື *moneypass.com/atm-locator.html* (ເປັນພາສາອັງກິດ). |
| ການຖອນເງິນຈາກຕູ້ ATM (ນອກເຄືອຂ່າຍ) | $0.99 | ນີ້ແມ່ນຄ່າທຳນຽມໃນການຖອນຕໍ່ຄັ້ງຂອງພວກເຮົາ. ຄ່າທຳນຽມນີ້ ແມ່ນໄດ້ຮັບການຍົກເວັ້ນສຳລັບການຖອນເງິນຈາກຕູ້ ATM ໃນ 2 ຄັ້ງທຳອິດຂອງທ່ານຕໍ່ການໂຫຼດຄັ້ງໜຶ່ງ, ເຊິ່ງລວມທັງການຖອນເງິນຈາກຕູ້ ATM (ນອກເຄືອຂ່າຍ) ແລະ ການຖອນເງິນຈາກຕູ້ ATM ສາກົນອີກດ້ວຍ. “ນອກເຄືອຂ່າຍ” ໝາຍເຖິງບັນດາຕູ້ ATM ທັງໝົດທີ່ຢູ່ນອກເຄືອຂ່າຍ ຕູ້ ATM ຂອງທະນາຄານ U.S. Bank ຫຼື MoneyPass. ນອກຈາກນັ້ນ ທ່ານອາດຈະຖືກຮຽກເກັບຄ່າທຳນຽມຈາກຜູ້ໃຫ້ບໍລິການຕູ້ ATM ເຖິງແມ່ນວ່າການເຮັດທຸລະກຳຂອງທ່ານບໍ່ສຳເລັດກໍຕາມ. |
| ການຖອນເງິນສົດນຳພະນັກງານບໍລິການລູກຄ້າ | $0 | ນີ້ແມ່ນຄ່າທຳນຽມຂອງພວກເຮົາ ໃນເວລາທີ່ທ່ານຖອນເງິນສົດອອກຈາກບັດຂອງທ່ານຈາກ ພະນັກງານບໍລິການລູກຄ້າ ຢູ່ທະນາຄານ ຫຼື ສະຫະພັນເຄຣດິດທີ່ຍອມຮັບບັດ Visa®. |
| **ການນຳໃຊ້ບັດຂອງທ່ານຢູ່ນອກສະຫະລັດ.** | | |
| ການເຮັດທຸລະກຳລະຫວ່າງປະເທດ | 2% | ນີ້ແມ່ນຄ່າທຳນຽມຂອງພວກເຮົາ ທີ່ນຳໃຊ້ໃນເວລາທີ່ທ່ານນຳໃຊ້ບັດຂອງທ່ານສຳລັບການຊື້ເຄື່ອງຢູ່ຮ້ານຄ້າຕ່າງປະເທດ ແລະ ສຳລັບການຖອນເງິນສົດຈາກຕູ້ເອທີເອັມໃນຕ່າງປະເທດ ແລະ ຄິດໄລ່ເປັນເປີເຊັນຈາກຈຳນວນເງິນທີ່ເຮັດທຸລະກຳເປັນເງິນໂດລາ, ຫຼັງຈາກມີການແລກປ່ຽນເປັນສະກຸນເງິນໃດໜຶ່ງແລ້ວ. ເຖິງແມ່ນວ່າທ່ານ ແລະ/ຫຼື ພໍ່ຄ້າ ຫຼື ຕູ້ ATM ຈະຢູ່ໃນສະຫະລັດກໍຕາມ, ການເຮັດທຸລະກຳບາງລາຍການ ຈະຖືວ່າເປັນການເຮັດທຸລະກຳໃນຕ່າງປະເທດພາຍໃຕ້ກົດລະບຽບກ່ຽວກັບເຄືອຂ່າຍທີ່ກ່ຽວຂ້ອງ ແລະ ພວກເຮົາບໍ່ໄດ້ຄວບຄຸມວິທີການຈັດປະເພດຮ້ານຄ້າ, ຕູ້ ATM ແລະ ການເຮັດທຸລະກຳເຫຼົ່ານີ້ ເພື່ອຈຸດປະສົງນີ້. |
| ການຖອນເງິນສົດຈາກຕູ້ ATM ສາກົນ | $0.99 | ນີ້ແມ່ນຄ່າທຳນຽມໃນການຖອນຕໍ່ຄັ້ງຂອງພວກເຮົາ. ຄ່າທຳນຽມນີ້ ແມ່ນໄດ້ຮັບການຍົກເວັ້ນສຳລັບການຖອນເງິນຈາກຕູ້ ATM ໃນ 2 ຄັ້ງທຳອິດຂອງທ່ານຕໍ່ການໂຫຼດຄັ້ງໜຶ່ງ, ເຊິ່ງລວມທັງການຖອນເງິນຈາກຕູ້ ATM (ນອກເຄືອຂ່າຍ) ແລະ ການຖອນເງິນຈາກຕູ້ ATM ສາກົນອີກດ້ວຍ. ນອກຈາກນັ້ນ ທ່ານອາດຈະຖືກຮຽກເກັບຄ່າທຳນຽມຈາກຜູ້ໃຫ້ບໍລິການຕູ້ ATM ເຖິງແມ່ນວ່າການເຮັດທຸລະກຳຂອງທ່ານບໍ່ສຳເລັດກໍຕາມ. |



ບັດ ReliaCard ແມ່ນອອກໃຫ້ໂດຍ ສະມາຄົມແຫ່ງຊາດ (National Association) ຂອງທະນາຄານ U.S. Bank ຕາມໃບອະນຸຍາດຈາກ Visa U.S.A. Inc.
© 2023 U.S. Bank. Member FDIC.

| ອື່ນໆ | | |
|---|---|---|
| ການປ່ຽນບັດໃໝ່ | $0 | ນີ້ແມ່ນຄ່າທໍານຽມຂອງພວກເຮົາຕໍ່ການປ່ຽນບັດໃໝ່ທີ່ສົ່ງໄປໃຫ້ທ່ານດ້ວຍການຈັດສົ່ງແບບມາດຕະຖານ (ບໍ່ເກີນ 10 ວັນລັດຖະການ). |
| ການຈັດສົ່ງການປ່ຽນບັດໃໝ່ແບບດ່ວນ | $15.00 | ນີ້ແມ່ນຄ່າທໍານຽມຂອງພວກເຮົາ ສໍາລັບການຈັດສົ່ງແບບດ່ວນ (ບໍ່ເກີນ 3 ວັນລັດຖະການ) ທີ່ຮຽກເກັບເພີ່ມຕື່ມຈາກຄ່າທໍານຽມໃນການປ່ຽນບັດໃໝ່. |

ເຖິງແມ່ນວ່າການຕິດຕໍ່ສື່ສານນີ້ ແມ່ນມີໃຫ້ເປັນ [ພາສາລາວ] ກໍຕາມ, ແຕ່ການຕິດຕາມການຕິດຕໍ່ສື່ສານຂອງທະນາຄານ U.S. Bank ແລະ ເອກະສານຕ່າງໆ ທີ່ກ່ຽວຂ້ອງກັບຂໍ້ຕົກລົງຕາມສັນຍາ, ການເປີດເຜີຍຂໍ້ມູນ, ແຈ້ງການ ແລະ ໃບແຈ້ງຍອດທະນາຄານຂອງທ່ານ, ການບໍລິການທະນາຄານອິນເຕີເນັດ ແລະ ໂທລະສັບມືຖື ແມ່ນອາດຈະມີໃຫ້ເປັນພາສາອັງກິດເທົ່ານັ້ນ. ທ່ານຕ້ອງສາມາດອ່ານ ແລະ ເຂົ້າໃຈເອກະສານເຫຼົ່ານີ້ ຫຼື ໄດ້ຮັບການຊ່ວຍເຫຼືອໃນການແປເອກະສານເຫຼົ່ານີ້ ເພື່ອໃຫ້ເຂົ້າໃຈ ແລະ ສາມາດນໍາໃຊ້ຜະລິດຕະພັນ ຫຼື ການບໍລິການນີ້. ຈະມີເອກະສານສະບັບພາສາອັງກິດໃຫ້ຕາມການຮ້ອງຂໍ.

ເງິນຂອງທ່ານມີສິດໄດ້ຮັບການປະກັນໄພ FDIC. ເງິນຂອງທ່ານຈະຖືກເກັບໄວ້ນໍາ ທະນາຄານ U.S. Bank National Association, ຊຶ່ງເປັນສະຖາບັນທີ່ມີການປະກັນໄພ FDIC ແລະ ໄດ້ຮັບການປະກັນໄພສູງເຖິງ $250,000 ຈາກ FDIC ໃນກໍລະນີທີ່ທະນາຄານ U.S. Bank ລົ້ມລະລາຍ. ເຂົ້າເບິ່ງ *fdic.gov/deposit/deposits/prepaid.html* (ເປັນພາສາອັງກິດ) ສໍາລັບລາຍລະອຽດຕ່າງໆ.

ບໍ່ມີຄຸນສົມບັດການເບີກເງິນເກີນບັນຊີ/ເຄຼດິດ.
ຕິດຕໍ່ ຝ່າຍບໍລິການຜູ້ຖືບັດ (Cardholder Services) ໂດຍການໂທຫາເບີ **1-866-363-4136**, ໂດຍການຕິດຕໍ່ທາງໄປສະນີທີ່ P.O. Box 551617, Jacksonville, FL 32255 ຫຼື ເຂົ້າໄປທີ່ ***usbankreliacard.com*** (ເປັນພາສາອັງກິດ).

ສໍາລັບຂໍ້ມູນທົ່ວໄປກ່ຽວກັບບັນຊີຊໍາລະແບບຕື່ມເງິນ, ໃຫ້ເຂົ້າໄປທີ່ *cfpb.gov/prepaid* (ເປັນພາສາອັງກິດ). ຖ້າຫາກທ່ານມີຄໍາຮ້ອງທຸກ ກ່ຽວກັບບັນຊີແບບຕື່ມເງິນ, ໃຫ້ໂທຫາ ສໍານັກງານປົກປ້ອງດ້ານການເງິນຂອງຜູ້ບໍລິໂພກ (Consumer Financial Protection Bureau) ທີ່ເບີ 1-855-411-2372 ຫຼື ເຂົ້າໄປທີ່ *cfpb.gov/complaint* (ເປັນພາສາອັງກິດ).



ບັດ ReliaCard ແມ່ນອອກໃຫ້ໂດຍ ສະມາຄົມແຫ່ງຊາດ (National Association) ຂອງທະນາຄານ U.S. Bank ຕາມໃບອະນຸຍາດຈາກ Visa U.S.A. Inc.
© 2023 U.S. Bank. Member FDIC.